ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------===000===------

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 283 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 28 APR 2015

ສຳນັກງານ ຄຄຊ
ຮັບ ເລກທີ 424
ວັນທີ 28 APR 2015
ໂທລະສັບ 021 217770

## ແຈ້ງການ

ເຖິງ: - ບັນດາກົມ ແລະ ທຽບເທົ່າກົມພາຍໃນ ທຫລ,

- ບັນດາທະນາຄານທຸລະກິດລັດ.

ເລື່ອງ: ຂະບວນການສັກຢາກັນພະຍາດໄຂ້ສະໝອງອັກເສບຍີ່ປຸ່ນ (JE) ສຳລັບກຸ່ມເປົ້າໝາຍ ອາຍຸແຕ່ 1 ປີ ຫາ 15 ປີ.

- ອີງຕາມ ຄຳສັ່ງແນະນຳຂອງປະທານຄະນະກຳມາທິການເພື່ອແມ່ ແລະ ເດັກ ແຫ່ງຊາດ ສະບັບເລກທີ 008/ຄມດຊ, ລົງວັນທີ 27 ມີນາ 2015;

ເພື່ອປະຕິບັດຕາມຄຳສັ່ງແນະນຳຂອງຄະນະກຳມາທິການ ເພື່ອແມ່ ແລະ ເດັກແຫ່ງຊາດ, ຫ້ອງການທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງທ່ານ ເພື່ອປຸກລະດົມພະນັກງານຢູ່ຂະແໜງການທະນາຄານ ໃຫ້ເອົາລູກຫຼານຂອງຕົນ ອາຍຸແຕ່ 1 ປີ ຫາ 15 ປີ ສັກຢາກັນພະຍາດໄຂ້ສະໝອງອັກເສບຍີ່ປຸ່ນ (JE) ສ່ວນສະຖານທີ່ແມ່ນທາງພາກສ່ວນກ່ຽວຂ້ອງ (ສາທາລະນະສຸກນະຄອນຫຼວງ) ຈະໄດ້ລົງປະຕິບັດຕາມແຕ່ລະໂຮງຮຽນເລີຍ ເລີ່ມຕັ້ງແຕ່ວັນທີ 20-30 ເມສາ 2015 ບໍ່ມີຄ່າໃຊ້ຈ່າຍ. ນອກຈາກນີ້, ຖ້າຫາກລູກຫຼານຂອງຕົນຍັງບໍ່ທັນໄດ້ຮັບການສັກຢາກັນພະຍາດດັ່ງກ່າວ ແມ່ນສາມາດໄປສັກໄດ້ຢູ່ໂຮງໝໍເມືອງແຕ່ລະເມືອງ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານ ເພື່ອຊາບ.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ພາສີ ພົມມະກອນ